Diploma Programme
Programme du diplôme
Programa del Diploma

# Lao A: literature – Standard level – Paper 1
# Lao A : littérature – Niveau moyen – Épreuve 1
# Laosiano A: literatura – Nivel medio – Prueba 1

Wednesday 10 May 2017 (afternoon)
Mercredi 10 mai 2017 (après-midi)
Miércoles 10 de mayo de 2017 (tarde)

1 hour 30 minutes / 1 heure 30 minutes / 1 hora 30 minutos

---

### Instructions to candidates

- Do not open this examination paper until instructed to do so.
- Write a guided literary analysis on one passage only. In your answer you must address both of the guiding questions provided.
- The maximum mark for this examination paper is **[20 marks]**.

### Instructions destinées aux candidats

- N'ouvrez pas cette épreuve avant d'y être autorisé(e).
- Rédigez une analyse littéraire dirigée d'un seul des passages. Les deux questions d'orientation fournies doivent être traitées dans votre réponse.
- Le nombre maximum de points pour cette épreuve d'examen est de **[20 points]**.

### Instrucciones para los alumnos

- No abra esta prueba hasta que se lo autoricen.
- Escriba un análisis literario guiado sobre un solo pasaje. Debe abordar las dos preguntas de orientación en su respuesta.
- La puntuación máxima para esta prueba de examen es **[20 puntos]**.

2217 – 0583



© International Baccalaureate Organization 2017

International Baccalaureate
Baccalauréat International
Bachillerato Internacional

https://xtremepape.rs/

ໃຫ້ເຈົ້າວິຈານໃນແງ່ວັນນະຄະດີ**ໜຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້
ໃນຄຳຕອບເຈົ້າຕ້ອງເວົ້າເຖິງຄຳຖາມ**ທັງສອງ**ທີ່ຂຽນໄວ້ຫລັງເລື່ອງ

**1.**

ລົມແຜດເປົ່າ ແປວແດດລະຍິບລະຍັບ ໂລມເລຍຊາກໄມ້ ກອງສຸມເປັນຍ່ອມໆ
ບັດນີ້ມັນແຫ້ງແດດເປັນສີຂີ້ໜ້ຽງພ້ອມຈະຖືກໄຟເຜົາ ໃຫ້ເປັນເຖົ່າຖ່ານ ຕົ້ນໄມ້
ຂອບປ່າທີ່ຍັງຢືນຄອຍຖ້າການບຸກເບີກຍັງພ້ອມໃຈກັນສົ່ງສຳນຽງເພງອຳລານີ
ສາກຫລັງເປັນເວີ້ງຟ້າແລະໜ້ານ້ຳຝາຍໃຫຍ່
"ເສຍໃດກໍ່ກໄມ້ໃຫຍ່ ແພງໄວ້ຊຸນຣົ່ມ"
ພວກເຂົາເປັນພະນັກງານບໍລິສັດກໍ່ສ້າງມາຮັບວຽກບຸກເບີກປ່າດົງຂອບເຂດອ້ອມໆອ່າງເກັບນ້ຳ
ຮອບໆບໍລິເວນອ່າງເກັບນ້ຳເຕັມໄປດ້ວຍຕົ້ນໄມ້ ມີສະພາບເປັນປ່າດົງ ດິບສົມບູນ
ເປັນປ່າຕົ້ນນ້ຳ ເປັນປ່າອະນຸລັກ
ເປັນປ່າຊົງຄູນຄ່າໃນລະບົບນິເວດຊຶ່ງບໍ່ມີຫລາຍແຫ່ງພໍປານໃດດອກ
"ປ່າດິບປານນີ້ ຄວນແພງໄວ້ເປັນດົງຢາພື້ນເມືອງ"
"ແພງໄວ້ເຮັດຫຍັງ
ມັນກີດຂວາງການພັດທະນາແຫນ້ງສູ້ສ້າງຣີສອດສ້າງສວນອາຫານໃຫ້ຄົນມາທ່ຽວ
ຫລິ້ນມາກິນມານອນ"
"ມີຕົ້ນໄມ້ເປັນຢາຫລາຍແນວຫາຍາກ ເສຍດາຍຕ້ອງຖືກລະລາຍໄປຊົ່ວອ້ານຄືນ"
"ຊຸມເຮົານ້ຳໜ້າເປັນລູກນ້ອງເຂົາ ເຂົາຈ້າງມາ ເຂົາຈ່າຍເງິນ ມຶງຊິຂັດຂ້ອງຫາວິມານພິສັງຫີ"
"ແຕ່ເຈົ້ານາຍເຮົາຍັງຈອງລ້າງຈອງຜານອິດສາບັງບຽດພີສັງກະດໍ້ກະເດ້ຍ
ເຈົ້ານາຍບາຍຫົວກຫລັບຫູກະຫລັບຕາຢູ່ບໍ່ຈຶ່ງບໍ່ເຫັນເຂົາລ່ວງເກີນຂົ່ມຂືນປ່າດົງພົງໄພ"
"ຄັນມຶງເປັນເຈົ້ານາຍກະຊິຄືກັນ ມີແຕ່ຜີຢາກມາຫລອກ ກູຊິຫັກຄໍຜີໂລດ ຜີມັນຢາກຄາບຫຍັງ
ເອົາໃຫ້ມັນຄາບແລ້ວຫັກຄໍມັນ ຢ່າໄປຫວັງເອົາຫຍັງນຳຜີ ມຶງມັນພວກຫົວບູຮານ"
"ເວົ້າເລື່ອງນາຍຕຸ່ມ ເຮັດແນວໃດຄືເປັນເຈົ້າຂອງດົງດິບຕັ້ງຫລາຍເຮັກຕາ ກະດຽວວ່າ
ຊາວບ້ານເຂົາຫວງໄວ້ຜີມະເຫສັກແຖວນີ້ກະບໍ່ຫັກຄໍມັນເນາະ"
"ມັນຊິແພ້ເງິນບໍ່ລະ ຊາວບ້ານແຖວນີ້ ເຄີຍຈອງດົງໄວ້ຜູ້ລະສອງສາມເຮັກຕາ ມີຜູ້ມາ
ຊື້ກໍເລີຍພາກັນຂາຍໄປສ່ຳ ເອົາເງິນໄປຈັບຈ່າຍໃຊ້ຊອຍ ດີກວ່າຊິອູ້ມດົງໄວ້"
"ຫ້າມຖາງປ່າ ບາດວ່າຄົນມີເງິນແລ້ວຖາກຖາງໃສກະໄດ້ຊ້ຳຫວະ ພວກລ້າງຜານບ້ານເມືອງ
ຟ້າກະບໍ່ຜ່າຫົວມັນແນ່ເນາະ"
"ມັນເປັນສັຈຈະທຳນິຍົມທຶນ ມີເງິນເຮັດຫຍັງບໍ່ຜິດ"
"ປະໂຫຍດສ່ວນຕົວຄັກໆ ຫັກລ້າງຖາງພົງຊັດໆ ກູເຮັດນຳບໍ່ໄດ້ແລ້ວ ກູຊິລະອອກ ມຶງບອກ
ຫົວໜ້າໂລດວ່າກູໂຕນໜີແລ້ວ"
ແຕ່ປ່າຕຶບຖືກຂົ່ມຂືນ ຕົ້ນໄມ້ໃຫຍ່ນ້ອຍລົ້ມລະເນລະນາດ
ບັດນີ້ມັນເປັນເພງໂສກາອາດູນຈາກຜືນປ່າ ຕົ້ນໄມ້ໃຫຍ່ອີກຫລາຍຕົ້ນຢັງຢືນຢັງຢາຍເໝືອນ
ທະຫານບາດເຈັບລຸກຂຶ້ນຢືນຍາມທ່າມກາງສະໜໍລະພູມຣົບ…
ເຝົ້າຊາກສົບຂອງບັນດາພີ່ນ້ອງທີ່ຖືກມັດຈຸລາດເດັດໃຫ້ລົ້ມລົງຢູ່ອ້ອມຂ້າງອ້ອມແອວ
ເພື່ອນຝູງລົ້ມເຕັງກັນເດຍລະດາດ

https://xtremepape.rs/

ຫລັງຈາກສຳລວດອອກຫວິດສາຍຕາທົ່ວໜ້າຊື່ນາຍຕຸ່ນຍ່າງເລາະເບິ່ງພື້ນທີ່ ໂອ່… ປ່າຮົກຖືກເປີດໄປຫລາຍແລ້ວເດ່… ຄວນຈະເອົາຊ່າງມາວາງຜັງ ແລະດຳເນີນການກໍ່ສ້າງໄດ້ແລ້ວ

ທັນໃດນັ້ນລົມພະຍຸພັດອື້ອື້ມາແບບກະທັນຫັນ ນາຍຕຸ່ນຕົກຕະລຶງເມື່ອງ່າບົກໃຫຍ່ຫັກທັບລົດ'ອັນຝີຈຸ່ມ' ຄັນງາມຂອງຕົ້ນຢ່າງບໍ່ໜ້າເຊື່ອ ແລະອີກທັນໃດນັ້ນສາຍຟ້າໄດ້ຟາດລົງວມາ ເປັນເຊັ້ນຍາວມັນຊັດລົງມາພໍດີບ່ອນນາຍຕຸ່ນຢືນຢູ່ກາງເດີນ ໃນຊົ່ວພບຕານັ້ນ ນາຍຕຸ່ນກາຍເປັນສົບທີ່ຖືກເຜົາດ້ວຍກະແສໄຟຟ້າແຮງສູງຫລາຍແສນໂວນ

ນິຕິທົວຊົນ *ຜີທ້ວຍແຮ່* ໃນ *ໂຮມເລື່ອງສັ້ນ ຂອງດີ* ປີພິມ (2012)

(ກ) ຜູ້ຂຽນໃຊ້ຄວາມເຊື່ອເລື່ອງໄສຍາຊາດເພື່ອຈະສື່ອີ່ຫຍັງ

(ຂ) ຜູ້ຂຽນໃຊ້ວິທີການອີ່ຫຍັງເພື່ອຈະສື່ຄວາມຄິດຂອງເພິ່ນ



https://xtremepape.rs/

**2.**

ມີບ້ານ ບໍ່ມີນາ ຫຍ້າໜ້າ ບໍ່ເຫືອດຄໍ ປໍແດງຖືກມັດສອກ
ຖືກຄອກ ໄມ້ລຽນລໍາ ເກົາກໍາ ເອົາທຸກສິ່ງ
ມີດິ່ງ ບໍ່ມີເຄືອ ມີເຂືອບໍ່ມີຂວັ້ນ
ມີຊວ້ານ ແຕ່ບໍ່ມີດາງ ມີນາງ ບໍ່ມີຜົວ
ມີຂົວ ບໍ່ມີຄົນໄຕ່ ມີໄພ່ ບໍ່ມີນາຍ
ຈາຫລາຍ ມັກຜິດຄອງ ມີຂອງ ບໍ່ມີເງິນຊື້
ຄົນຊື່ມີນ້ອຍ ບໍ່ມີຫລາຍ ຄົນຊິຕາຍ ເພາະປາກຮົ່ວ
ຄົນນົ່ງຕົ່ງ ອ່ອນນ້ອຍຜະຫຍາ ໃນໂລກາ ຊອມໄປຊີ້ພໍ້
ໄມ້ອໍ້ຫລໍ້ ຫລາຍລ້ານຫາກເຫັນ ຍາມກາງເວັນ ຄົນນົ່ງເຄົ້າເມົ້າ
ກາງຄືນເຂົ້າ ເສບແວ່ນແພນແຂນ
ພວກຕ່າງແດນ ຫຸ່ມເຂົ້າລົງພື້ນ ເກີດນໍ້າຕື້ນ ໜອງແຫ້ງເປັນຜົງ
ເງິນເຕັມຖົງ ຄືດັ່ງໃບໄມ້ ພວກຍາກໄຮ້ ຫລາຍລົ້ນເຕັມດິນ
ພວກມີສິນ ຖືກຮໍລົງຕໍ່າ ຄົນປາກພໍ່າຖືກຍົກໄວ້ສູງ
ພວກເປັນລູງ ເໜັນຫລາຍເຂົ້າໃກ້ ຄົນສິນໄຮ້ ຍົກຂື້ນພຽງຕາ
ພວກພໍ່ນາ ພາກັນອຶດເຂົ້າ ພວກເປັນເຈົ້າ ໃຈມືດລືມຄອງ
ພວກຈອງຫອງ ແຖລງເປັນນັກປາດ ນັກປາດແທ້ມີນ້ອຍບໍ່ຫລາຍ
ບັນຍາຍທັມ ໃຫ້ເຈົ້າຮູ້ຮໍ່າ ຜູ້ທີ່ຮູ້ ຈະໄດ້ຄອງເມືອງ
ພວກຜ້າເຫລືອງ ຈະເປັນທວຍຄ້າ ໃຈກ້າສ້າງບາບຕ່າງບຸນ
ຂຸມເປັນຂຸມ ເປັນໂຈນທ່ຽວປຸ້ນ ເມືອງຊິຫວຸ້ນ ໄປໜ້າຊິເຫັນ
ຄົນຊິເປັນ ພະຍາດແະຫລາດ ເລືອດແດງຂາດ ກັບເກີດເປັນໜອນ
ຄົນຊິຈອນ ໜີໄປຕ່າງຖິ່ນ
ອະທິບາຍໃຫ້ຮູ້ເຫັດ ຢ່າກົວເຫັດ ຄອງນັ້ນບໍ່ງາມ
ນໍ້ານະທີ ມັນຍັງຮູ້ແຫ້ງ ເຫັດກະແດ້ງ ຍັງອ່ອນຍັງມັນ
ສິ່ງສໍາຄັນ ແມ່ນກໍ່ໄມ້ໄຜ່ ໄຜຊິຮູ້ໃຊ້ ລໍາໄຜ່ແອວຫລາຍ
ສຸດແຕ່ພາຍ ຍັງປີ້ລົງຍາກ ອັນລໍາບາກ ແມ່ນຫົວໃຈຄົນ

ບໍ່ປາກົດຊື່ຜູ້ແຕ່ງ *ທາງຫລຸດພົ້ນ* (ບໍ່ປາກົດປີແຕ່ງ)

(ກ) ຜູ້ຂຽນໃຊ້ສັນຍາລັກແນວໃດເພື່ອຈະສະທ້ອນພາບສັງຄົມ

(ຂ) ບົດກະວີເລື່ອງນີ້ມີຜົນກະທົບແນວໃດຕໍ່ອາລົມຜູ້ອ່ານ

https://xtremepape.rs/